ກະຊວງກະສິກຳ ແລະ ປ່າໄມ້
ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້

# ເຕັກນິກພື້ນຖານ ໃນການຄົ້ນຄ້ວາທົດລອງດ້ານປ່າໄມ້



ໂຄງການຍ່ອຍຄົ້ນຄ້ວາປ່າໄມ້
ໂຄງການຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ເຂດພູດອຍຮ່ວມມື ລາວ - ຊູແອດ

ທັນວາ, 2006

# ສາລະບານ


| ເນື້ອໃນ | ໜ້າ |
| --- | --- |
| ສາລະບານ | 3 |
| ຄຳຂອບໃຈ | 4 |
| ຄຳນຳ | 5 |
| ການປູກແຂມເພື່ອເປັນສິນຄ້າ | |
| ໄພວອນ ພອນພະນິມ | 6 |
| ການປູກໄມ້ສັກແບບດ່ຽວ ໃນລະບົບກະສິກຳ-ປ່າໄມ້ | |
| ສົມພະຈັນ ວົງພະສຸວັນ | 8 |
| ການປູກເປືອກເມືອກ ແລະ ຢາງບົງໃນພື້ນທີ່ປ່າເລົ່າ | |
| ຄຳພອນແສງດາລາ | 10 |
| ການປູກເສີມກ້ອງປ່າໄມ້ບ້ານດ້ວຍເຄື່ອງປ່າຂອງດົງ ທີ່ມີຄຸນຄ່າທາງດ້ານເສດຖະກິດ | |
| ຄຳພອນແສງດາລາ | 13 |
| ການປູກຂີ້ງດຳເພື່ອເປັນສິນຄ້າ | |
| ບັນຊາ ທຳມະວົງ | 16 |
| ການປູກຫວາຍເພື່ອເອົາຍອດ | |
| ຄຳພອນແສງດາລາ | 18 |
| ການປູກດອກເຜີ້ງເພື່ອເປັນສິນຄ້າ | |
| ຄຳພອນແສງດາລາ | 20 |

# ຄຳຂອບໃຈ

ພວກເຮົາຂໍສະແດງຄວາມຂອບໃຈ ມາຍັງພະນັກງານທັງ ຍິງ ແລະ ຊາຍ ຈາກໂຄງການຍ່ອຍຄົ້ນຄ້ວາປ່າໄມ້ ແລະ ທີມງານທຸກໆ ພາກສ່ວນ ທີ່ໄດ້ເຮັດ ວຽກ ງານຮ່ວມກັນດ້ວຍຄວາມຫ້າວຫັນ ໃນການວາງແຜນການ, ການຈັດຕັ້ງປະຕິບັດ ໃນຂະບວນ ການທົດລອງຮ່ວມກັນໃນເຂດພື້ນທີ່ການ ຜະລິດຕົວຈິງຮ່ວມກັບຊາວກະສິກອນ ໃນໄລຍະຜ່ານມາ ໃນການເຮັດວຽກງານການຄົ້ນຄ້ວາຮ່ວມກັບຊາວກະສິກອນ ພວກເຮົາໄດ້ເຮັດ ວຽກເປັນທີມງານຊຶ່ງປະກອບມາຈາກຫລາຍພາກສ່ວນ ເຊັ່ນ: ຈາກສູນຄົ້ນຄ້ວາປ່າໄມ້, ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ, ຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ ແລະ ຫ້ອງການປະສານງານໂຄງການ ເມືອງໂພນໄຊ ແລະ, ຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ ແລະ ຫ້ອງການປະສານງານໂຄງການ ເມືອງ ນາໝໍ້

ພວກເຮົາຂໍຂອບໃຈມາຍັງ ໃນການປະກອບສ່ວນ ຂອງຊາວກະສິກອນ ໃນເຂດບ້ານເປົ້າໝາຍ ຂອງ ໂຄງການທັງສອງເມືອງ ທີ່ໄດ້ກ່າວມາຂ້າງເທິງ ໃນການເສັຍສະລະເວລາ, ແຮງງານ, ພື້ນທີ່ດິນ ແລະ ຄວາມຮູ້ທ້ອງຖິ່ນ ທີ່ພວກເຂົາເຈົ້າໄດ້ທຸ້ມເທໃສ່ ໃນການດຳເນີນການຄົ້ນຄ້ວາທົດລອງ ຮ່ວມກັນກັບໂຄງການພວກເຮົາ.

ການຄົ້ນຄ້ວາທົດລອງດ້ານປ່າໄມ້ສະບັບນີ້ ໄດ້ສຳເລັດຜົນກໍ່ຍ້ອນການຊີ້ນຳໆພາ ຂອງ ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້, ໂຄງການຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ເຂດພູດອຍຮ່ວມມື ລາວ-ຊູແອດ, ນອກຈາກນີ້ທາງໂຄງການຍ່ອຍຄົ້ນຄ້ວາປ່າໄມ້ ຂໍຂອບໃຈມາຍັງ ຫົວໜ້າ ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ພາກເໜືອ ພ້ອມດ້ວຍພະນັກງານໃນການຈັດຕັ້ງປະຕິບັດ ແລະ ຂໍຂອບໃຈມາຍັງພະນັກງານສົ່ງເສີມ

ພວກເຮົາຂໍຂອບໃຈມາຍັງ ຫົວໜ້າ ແລະ ຄະນະ ສູນຄົ້ນຄ້ວາປ່າໄມ້ , ຫົວໜ້າ ໂຄງການຄົ້ນຄ້ວາກະສິກຳ ແລະ ປ່າໄມ້ເຂດພູດອຍ ຮ່ວມມື ລາວ- ຊູແອດ, ຫົວໜ້າ ແລະ ຄະນະ ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ທີ່ຊີ້ນຳຢ່າງໃກ້ສິດຕິດແທດ

ພວກເຮົາມີຄວາມເພິ່ງພໍໃຈ ຕໍ່ກັບບັນດາພະນັກງານ ພະແນກຄຸ້ມຄອງການຄົ້ນຄ້ວາ ແລະ ຜູ້ປະສານງານ ອາວຸໂສຂອງໂຄງການ ໃນການຊຸກຍູ້ ແລະ ການໃຫ້ຂໍ້ສະເໜີແນະໃນການຂຽນບົດເຕັກນິກ ທາງດ້ານການຄົ້ນຄ້ວາທົດລອງດ້ານປ່າໄມ້

ພ້ອມດຽວກັນນີ້ ພວກມີຄວາມຍິນດີໃນການຮັບຟັງ ຄຳຄິດຄຳເຫັນ ແລະ ຂໍ້ແນະນຳ ຈາກບັນດາ ທ່ານ ຕໍ່ກັບບົດເຕັກນິກທາງດ້ານການຄົ້ນຄ້ວາທົດລອງດ້ານປ່າໄມ້ ສະບັບນີ້ດ້ວຍ.

ໂຄງການຍ່ອຍຄົ້ນຄ້ວາປ່າໄມ້

ທ່ານ ຄຳພອນ ມູນລະໄມ

## ຄຳນຳ

ໂຄງການຍ່ອຍຄົ້ນຄ້ວາປ່າໄມ້ ແມ່ນໜຶ່ງຂອງຫຼາຍຂອງໂຄງການຍ່ອຍ ທີ່ຂຶ້ນກັບໂຄງການຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ຮ່ວມມື ລາວ-ຊູແອດ ທີ່ມີເປົ້າໝາຍ ເພື່ອຄົ້ນຄ້ວາຫາຮູບແບບ, ເຕັກໂນໂລຢີທີ່ເໝາະທາງດ້ານປ່າໄມ້ ເພື່ອຈະບັນຈຸເຂົ້າໃນບັນດາ ແຜນຍຸດທະສາດທີ່ສຳຄັນຂອງລັດຖະບານ ຄື ການຫຼຸດພົ້ນອອກຈາກຄວາມທຸກຍາກໃນປີ 2020 ໂດຍເນັ້ນໃສ່ ການຮັບປະກັນ ທາງດ້ານສະບຽງອາຫານ ແລະ ການເພີ່ມການປົກຫຸ້ມຂອງປ່າໄມ້ ອັນທີ່ໄດ້ມີການນຳໃຊ້ ແລະ ຈັດສັນຢ່າງຍືນຍົງ.

ໂຄງການຍ່ອຍຄົ້ນຄ້ວາປ່າໄມ້ ໄດ້ດຳເນີນການຄົ້ນຄ້ວາ ເລີ່ມແຕ່ປີ 2002 ເປັນຕົ້ນມາ ຊຶ່ງໄດ້ມີການລົງເລິກຢູ່ 2 ຮູບແບບ ຄື: ການທົດລອງໃນຮູບແບບກະສິກຳ ແລະ ປ່າໄມ້ ແລະ ການຟື້ນຟູປ່າໄມ້ໃນເຂດປ່າເລົ່າ. ໃນບັນດາຮູບແບບດັ່ງກ່າວ ແມ່ນກວມເອົາ ຫຼາຍກິດຈະກຳການຄົ້ນຄ້ວາ ເຊັ່ນ: ການນຳເອົາຊະນິດເຄື່ອງປ່າຂອງດົງທີ່ເປັນສິນຄ້າອອກມາປູກ, ໄມ້ອຸດສະຫະກຳ ແລະ ໄມ້ຊະນິດອື່ນໆ ທີ່ມີຄຸນສົມບັດໃນການຟື້ນຟູປ່າ ແລະ ເປັນເສດຖະກິດໃຫ້ແກ່ຊາວກະສິກອນ ຜູ້ທີ່ເຂົ້າຮ່ວມກິດຈະກຳການຄົ້ນຄ້ວາກັບໂຄງການ.

ການຄົ້ນຄ້ວາທົດລອງທາງດ້ານປ່າໄມ້ ໃນພື້ນທີ່ຊາວກະສິກອນແບບມີສ່ວນຮ່ວມນີ້ ໄດ້ຈັດຕັ້ງຂຶ້ນຢູ່ໃນບັນດາບ້ານເປົ້າໝາຍຂອງສອງເມືອງຈຸດສຸມຂອງໂຄງການ ຄື: ເມືອງໂພນໄຊ ແຂວງ ຫຼວງພະບາງ ແລະ ເມືອງນາໝໍ້ ແຂວງ ອຸດົມໄຊ, ໃນການຈັດຕັ້ງປະຕິບັດວຽກງານການຄົ້ນຄ້ວາທົດລອງຮ່ວມກັບຊາວກະສິກອນຜ່ານມາ ມີຫຼາຍກິດຈະກຳການຄົ້ນຄ້ວາ ທີ່ສາມາດສ້າງເປັນປຶ້ມແນະນຳທາງດ້ານເຕັກນິກເບື້ອງຕົ້ນທາງດ້ານວິຊາການ, ເພື່ອເປັນຄວາມຮູ້ພື້ນຖານໃຫ້ແກ່ຊາວກະສິກອນ ຜູ້ທີ່ມີຄວາມສົນໃຈຢາກນຳເອົາໄປຈັດຕັ້ງປະຕິບັດດ້ວຍ ຕົນເອງເພື່ອສ້າງລາຍຮັບສູງຂຶ້ນກ່ວາເກົ່າ.

ປຶ້ມເຕັກນິກສະບັບນີ້ ໄດ້ຂຽນຂຶ້ນມາຈາກຜົນ ຂອງການຄົ້ນຄ້ວາທົດລອງ ໃນພື້ນທີ່ຂອງຊາວກະສິກອນ ໂດຍການຖອດຖອນບົດຮຽນລະຫວ່າງ ນັກຄົ້ນຄ້ວາ, ນັກສົ່ງເສີມ ແລະ ຊາວກະສິກອນ ຜູ້ເຂົ້າຮ່ວມການຄົ້ນຄ້ວາທົດລອງ. ແຕ່ເຖິງຢ່າງໃດກໍຕາມ ປຶ້ມເຕັກນິກທາງດ້ານປ່າໄມ້ສະບັບນີ້ ເປັນພຽງຄວາມຮູ້ ແລະ ປະສົບການ ການຄົ້ນຄ້ວາທົດລອງຮ່ວມກັບຊາວກະສິກອນ ດັ່ງນັ້ນ, ຍັງມີຂໍ້ຈຳກັດບາງດ້ານ, ຫວັງວ່າ ທ່ານຜູ້ອ່ານ, ຜູ້ນຳໃຊ້ ຖ້າມີຂໍ້ຄິດເຫັນ ແລະ ຂໍ້ແນະນຳ ພວກເຮົາມີຄວາມຍິນດີຮັບຟັງ ແລະ ຮັບເອົາ ເພື່ອເປັນການປັບປຸງ ແກ້ໄຂໃຫ້ສົມບູນແບບຂຶ້ນຕື່ມ

# ການປູກແຂມເພື່ອເປັນສິນຄ້າ.



ແຂມແມ່ນເຄື່ອງປ່າຂອງດົງຊະນິດໜຶ່ງ ທີ່ມີຄຸນຄ່າທາງດ້ານເສດຖະກິດ ທີ່ສາມາດ ສ້າງລາຍຮັບເສີມໃຫ້ ແກ່ປະຊາຊົນ ໂດຍສະເພາະແມ່ນປະຊາຊົນໃນເຂດຊົນນະບົດ. ແຂມ ສາມາດຂະຫຍາຍພັນໄດ້ໃນຫຼາຍປະເທດຄື: ຈີນ, ຫວຽດນາມ, ໄທ ແລະ ມຽນມາ. ສຳລັບຢູ່ປະເທດລາວ ແມ່ນພົບເຫັນຢູ່ທາງພາກເໜືອ ຄື: ແຂວງ ຫຼວງນ້ຳທາ, ຫຼວງພະບາງ, ອຸດົມໄຊ, ຜົ້ງ ສາລີ, ຫົວພັນ. ກົກແຂມມັກ ເກີດຢູ່ໃນປ່າແຈ້ງ, ຜ່າຫີນ, ແລະ ຕາມພູເຂົາສູງຊັນ, ເຊິ່ງມີຄວາມ ສູງຈາກລະດັບນ້ຳທະເລປະມານ 300 ຫາ 1.400 ແມັດ. ແຂມມີຄຸນປະໂຫຍດ ຄື: ຊໍ່ດອກແຂມນຳມາເຮັດຟອຍ ເພື່ອທຳຄວາມສະອາດພື້ນ, ບາງທ້ອງຖິ່ນ ໜໍ່ອ່ອນນຳມາເປັນອາຫານ ( ຄຳເຫຼັກ ໄຊດາລາ 1999 ).



ການປູກແຂມ ແມ່ນທາງເລືອກໜຶ່ງທີ່ດີ ໃນການນຳໃຊ້ທີ່ດິນໃຫ້ເກີດຜົນປະໂຫຍດສູງສຸດ ເຊິ່ງເປັນການຊຸກຍູ້ວຽກງານການ ຜະລິດເປັນສິນຄ້າ ອັນທີ່ສ້າງຄວາມສະດວກສະບາຍ ແລະ ປະຢັດເວລາໃນການເກັບກູ້ ໂດຍຫັນຈາກການເກັບກູ້ໃນທຳມະຊາດມາເປັນສວນປູກ, ນອກຈາກນີ້ ການປູກເປັນສວນ ຂະໜາດໃຫຍ່ ຍັງສາມາດເພີ່ມບໍລິມາດຂອງການເກັບກູ້ໄດ້ຫຼາຍຂຶ້ນ.

## ຂັ້ນຕອນທາງດ້ານເຕັກນິກວິທີການ

### 1. ໄລຍະປູກ:



ໃນການປູກແຂມ ຂະໜາດທີ່ເໝາະສົມ ແມ່ນ ໃຫ້ປູກໃນໄລຍະຫ່າງລະຫວ່າງຂຸມ 2x2 ແມັດ, ໃນໄລຍະນີ້ ແຂມແມ່ນ ສາມາດປູກຮ່ວມກັບສວນປູກໄມ້ອື່ນໆໄດ້ ເຊັ່ນ: ສວນໄມ້ໃຫ້ໝາກ ເປັນຕົ້ນ.

### 2. ການຂຸດຂຸມປູກ:

ຂະໜາດຂອງຂຸມປູກ 20x20 ຊັງຕີແມັດ.

**3. ການປູກ:** ຕາມປົກກະຕິ ລະດູການປູກແຂມທີ່ເໝາະສົມ ແມ່ນຢູ່ໃນຊ່ວງທີ່ມີຝົນຕົກ ຄື: ທ້າຍເດືອນ ພຶດສະພາ ຫາ ເດືອນ ມິຖຸນາ ໃນຊ່ວງນີ້ ດິນຈະມີຄວາມຊຸ່ມຊື່ນ

ເຊິ່ງເໝາະແກ່ການຈະເລີນເຕີບໂຕຂອງຕົ້ນແຂມ. ການປູກແຂມແມ່ນ ປູກດ້ວຍເຫງົ້າ ( ແຂມສຸມໜຶ່ງຈະປະກອບມີຫຼາຍເຫງົ້າ ), ພາຍຫຼັງທີ່ຂຸດເອົາເຫງົ້າແຂມ ມາແລ້ວ ແມ່ນ ຕ້ອງໄດ້ມີການຄັດເລືອກ ເອົາເຫງົ້າທີ່ສົມບູນ ແລະ ແຕ່ລະເຫງົ້າ ທີ່ ຈະນຳໄປປູກ ແມ່ນບໍ່ໃຫ້ຫຼຸດ 3 ລຳ, ຈາກນັ້ນ ໃນວັນດຽວກັນ ແມ່ນໃຫ້ນຳເອົາເຫງົ້າແຂມທີ່ໄດ້ກະກຽມໄວ້ລົງປູກ ໃນຂຸມທີ່ໄດ້ຂຸດໄວ້. ສິ່ງທີ່ສຳຄັນ ແຂມແຕ່ລະເຫງົ້າ ແມ່ນມີອາຍຸບໍ່ເກີນ 1 ປີ ແລະ ຕັດລຳທີ່ປົ່ງອອກມາຈາກເຫງົ້າຍາວ ປະມານ 40 ຊັງຕີແມັດ.

## 4. ການບົວລະບັດຮັກສາ

ເພື່ອເຮັດໃຫ້ແຂມ ມີການຈະເລີນເຕີບໂຕໄດ້ດີນັ້ນ ແມ່ນ ມີຄວາມຈຳເປັນຈະຕ້ອງໄດ້ມີການບົວລະບັດຮັກສາ ໂດຍການອານາໄມ 2 ຄັ້ງ/ປີ ໃນນີ້ຄັ້ງທຳອິດ ແມ່ນສາມາດເຮັດໄດ້ ພາຍຫຼັງທີ່ປູກໄດ້ 2 ເດືອນ ແລະ ຄັ້ງທີ 2 ແມ່ນ 3 ເດືອນ ຕໍ່ມາ. ເຖິງຢ່າງໃດກໍ່ຕາມ, ການປູກແຂມ ໃນປີທຳອິດ ຕ້ອງປູກປະສົມກັບພືດກະສິກຳ ເຊັ່ນ: ໝາກເດືອຍ, ໝາກງາ, ສາລີ ແລະ ອື່ນໆ, ເພາະວ່າ ຈະເຮັດໃຫ້ມີການປະຫຍັດເວລາໃນການບົວລະບັດຮັກສາສວນແຂມ ເປັນຕົ້ນວ່າ ການ ຖາງຫຍ້າ ອອກຈາກພືດກະສິກຳ ກໍ່ເໝືອນກັບການຖາງຫຍ້າໃນສວນແຂມໄປພ້ອມໆກັນ.

## 5. ການຈະເລີນເຕີບໂຕ ແລະ ຜົນຜະລິດຂອງແຂມ

ຈາກຜົນການທົດລອງ ການປູກແຂມທີ່ ເມືອງໂພນໄຊ ໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ແຂມ ແມ່ນສາມາດຈະເລີນເຕີບໂຕໄດ້ດີ, ພາຍໃນໄລຍະເວລາ 9 ເດືອນ ແມ່ນສາມາດເກັບຜົນຜະລິດໄດ້, ນັ້ນກໍ່ໝາຍຄວາມວ່າ ໃຊ້ເວລາສັ້ນ, ລົງທຶນໜ້ອຍ, ເຮັດງ່າຍ, ໃຊ້ແຮງງານບໍ່ຫຼາຍ ແຕ່ສາມາດເກັບຜົນຜະລິດ ໄດ້ຍາວນານ ເຊິ່ງມີຕະຫຼາດຮອງຮັບ. ເຖິງຢ່າງໃດກໍ່ຕາມ, ໃນຊ່ວງປີທຳອິດ ຜົນຜະລິດແຂມ ( ດອກແຂມ ) ແມ່ນບໍ່ທັນໄດ້ເຕັມເມັດເຕັມໜ່ວຍ, ແຕ່ໃນປີທີ 2 ແມ່ນຜົນຜະລິດທີ່ໄດ້ຮັບແມ່ນດີຫຼາຍ ສະເລ່ຍລາຍຮັບໄດ້ 1,110,000 ກີບ/ປີ/ເຮັກຕາ ( ລາຄາ 3,500 ກີບ / ກິໂລກຼາມ ).

ໂດຍ: 1. ນ. ໄພວອນ ພອນພະນົມ — ສູນຄົ້ນຄ້ວາປ່າໄມ້ ໂທ: 020 5711392
2. ທ. ສີທົນ ໂສມມະລັດ — ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ
3. ທ. ບຸນສະຫວັດ ປານຜາສິດ — ພະນັກງານປະສານງານ ເມືອງ ໂພນໄຊ

# ປູກໄມ້ສັກ ແບບດ່ຽວໃນລະບົບກະສິກຳ ແລະ ປ່າໄມ້

ການທົດລອງນີ້ມີເປົ້າໝາຍເພື່ອ ເຮັດໃຫ້ການຜະລິດພືດກະສິກຳ ແລະ ການປູກໄມ້ຢືນຕົ້ນ ອຸດສະຫະກຳ ມີຄວາມປະສົມປະສານກັນ ເປັນລະບົບກະສິກຳ ແລະ ປ່າໄມ້; ເພື່ອຕິດຕາມ ແລະ ປະເມີນ ຄວາມອາດສາມາດ ໃນການຍອມຮັບເຕັກນິກການປູກໄມ້ສັກ ຊຶ່ງຈະມີ ການພັດທະນານຳໃຊ້ໃນວົງກວ້າງຕໍ່ໄປ.

## ຂັ້ນຕອນທາງດ້ານເຕັກນິກວິທີການ

ນຳໃຊ້ວິທີການທີ່ງ່າຍດາຍໃນການສຶກສາ ຄື : ທຳການແຈກຢາຍເບ້ຍໄມ້ສັກ ໃຫ້ແຕ່ລະຄອບຄົວ ຈຳນວນ 50 ເບ້ຍ ຕໍ່ຄອບຄົວ ໂດຍແນະນຳໃຫ້ປູກໃສ່ອ້ອມຮອບເນື້ອທີ່ ຫຼື ປູກເປັນຈຸ້ມ ຢູ່ບ່ອນທີ່ບໍ່ສາມາດ ຫຼື ບໍ່ເໝາະສົມກັບການປູກພືດກະສິກຳ ເຊັ່ນ : ບ່ອນທີ່ຊຸ່ມເກີນໄປ ( ແຄມຕາຝັ່ງ ), ມີຫີນຫຼາຍ ເປັນຕົ້ນ.

## 1. ຜົນໄດ້ຮັບ :

ການຈະເລີນເຕີບໂຕຂອງໄມ້ສັກ ໂດຍສະເລ່ຍຈະຢູ່ໃນເກນທີ່ດີ ໂດຍມີລວງສູງ 254,3 ຊຕມ ແລະ ໜ້າຕັດງພຽງເອິກ 4,4 ຊຕມ. ແຕ່ໄມ້ສັກທີ່ປູກ ມີເປີເຊັນລອດຕາຍ ຕ່ຳ ( 56,7% ), ສາເຫດຕົ້ນຕໍແມ່ນ ເບ້ຍທີ່ນຳໄປປູກ ມີຂະນາດນ້ອຍ ແລະ ຄວາມເອົາໃຈໃສ່ຂອງຄອບຄົວ ບໍ່ສູງເທົ່າທີ່ຄວນ.



ຊາວບ້ານຈະໃຫ້ທັດສະນະຕໍ່ລະບົບການທົດລອງນີ້ ວ່າ : ຢາກມີໄມ້ສັກປູກສຳລັບນຳໃຊ້ໃນອານາຄົດ, ແຕ່ມີຂໍ້ຍຸ້ງຍາກ ຄື: ເວລາທີ່ເຮົາບໍ່ໄດ້ເຮັດການຜະລິດຢູ່ທີ່ນັ້ນແລ້ວ ເວລາທີ່ຄອບຄົວຜູ້ອື່ນ ກັບເຂົ້າມາທຳການຜະລິດ ໃນເນື້ອທີ່ຕິດກັນ ເຂົາຈະຖາງ ແລະ ຈູດ ຊຶ່ງເຮັດໃຫ້ເບ້ຍໄມ້ ທີ່ປູກໄວ້ຖືກຈູດຕາຍໄດ້; ຢາກໃຫ້ສະໜັບສະໜູນເບ້ຍ ໄມ້ໃຫ້ຫຼາຍຂຶ້ນຢ່າງໜ້ອຍຕ້ອງ ໃຫ້ຮອບຈອດເນື້ອທີ່ ຫຼື ດີແທ້ ຢາກໄດ້ໃຫ້ພຽງພໍທັງໝົດເນື້ອທີ່ ຊຶ່ງຕ້ອງການປູກໄມ້ ( ເປັນບ່ອນທີ່ເຫັນວ່າປູກພືດ ກະສິກຳບໍ່ໄດ້ດີ ); ຢາກໃຫ້ມີການ ສະໜອງເບ້ຍໄມ້ໃຫ້ແກ່ ທຸກໆຄອບຄົວ ເພາະຈະມີການຄຸ້ມຄອງດ້ານສັດລ້ຽງ ແລະ ໄຟປ່າ ຮ່ວມກັນດີຂຶ້ນ.

ຄຳຕອບສ່ວນໃຫຍ່ຈະບອກວ່າ: ມັກ ແລະ ເຫັນດີເຮັດ ແຕ່ຂໍໃຫ້ຊາວບ້ານຜູ້ອື່ນໆ ເຮັດໄປພ້ອມໆນຳກັນ ຍ້ອນວ່າຈະມີການຊ່ວຍກັນ ໃນການປ້ອງກັນ ການທຳລາຍຈາກສັດ ແລະ ໄຟປ່າ.

## 2. ບົດຮຽນທີ່ຖອດຖອນໄດ້ :

ປະເດັນຕ່າງໆ ທີ່ຄວນຕ້ອງພິຈາລະນາສຳລັບການທີ່ຈະທຳການທົດສອບຄືນໃນຕໍ່ໜ້າ :

- ຈຳນວນເບ້ຍໄມ້ທີ່ນຳເຂົ້າມາເປັນສິ່ງທົດລອງ ຍັງມີໜ້ອຍ ດັ່ງນັ້ນ, ຄວນໃຫ້ເພີ່ມຈຳນວນ ຊຶ່ງອາດຈະຕ້ອງ ຈອດຮອບ ທຸກດ້ານເນື້ອທີ່ ( ເຮັດໃຫ້ຊາວບ້ານມີຄວາມກະຕື ລືລົ້ນຕື່ມ ), ແຕ່ການເກັບຂໍ້ມູນອາດຈະ ສຸ່ມ ຕົວຢ່າງເອົາ.
- ການທົດລອງຍັງບໍ່ໄດ້ພິຈາລະນາເຖິງຄຸນນະພາບເບ້ຍໄມ້ຢ່າງເຕັມທີ່ ເຮັດໃຫ້ມີການລຸດໂຕນກັນຫຼາຍທາງດ້ານການຈະເລີນເຕີບໂຕ, ດັ່ງນັ້ນ ເບ້ຍໄມ້ຄວນຈະມີຂະໜາດເທົ່າໆກັນ.
- ການທົດລອງຄວນເຮັດເປັນ 2 ຮູບແບບ ( 2 ສິ່ງທົດລອງແຕກຕ່າງກັນຊັດເຈນ ) ຄື : ປູກແບບເປັນຈຸ້ມ ແລະ ເປັນແບບຢາຍຕາມຂອບແຄມເນື້ອທີ່. ໂດຍໃຫ້ມີຊ້ຳ ຖືກຕ້ອງຕາມລະບົບການທົດລອງ.

## 3. ຂໍ້ສະຫຼຸບ

ຈຸດດີ ຂອງຮູບແບບການປູກໄມ້ສັກ ແບບດ່ຽວ ແມ່ນວ່າ ຊາວກະສິກອນຍັງສາມາດຮັກສາເນື້ອທີ່ປູກຝັງພືດອື່ນໆໄວ້ໄດ້, ໃນປະລິມານທີ່ພຽງພໍ ຍ້ອນໄມ້ສັກແມ່ນປູກຢູ່ຕາມແຄມຮົ້ວ ຫຼື ບ່ອນທີ່ບໍ່ເໝາະສົມສຳລັບປູກພືດອື່ນຢູ່ແລ້ວ; ໄມ້ຈະມີການເຕີບໂຕດີ ຍ້ອນໄດ້ຮັບທາດອາຫານ ແລະ ແສງສະຫວ່າງພຽງພໍ. ກົງກັນຂ້າມຂໍ້ເສຍຂອງການປູກຮູບແບບດັ່ງກ່າວນີ້ແມ່ນ :

- ຕົ້ນໄມ້ບໍ່ສູງຍ້ອນບໍ່ຖືກບຽດບັງຈາກຕົ້ນອື່ນ, ຈະແຕກກິ່ງຫງ່າຫຼາຍ ຊຶ່ງຕ້ອງໄດ້ໃຊ້ແຮງງານເພີ່ມສຳລັບການຕັດແຕ່ງ,
- ການປູກ ລຽບຕາມຊາຍແດນນີ້, ຊາວບ້ານຈະອະນາໄມ ພື້ນທີ່ປູກພືດຂອງຕົນ ພຽງແຕ່ໃນຂອບເຂດ ຂອງຕົນເອງເທົ່ານັ້ນ ສ່ວນຝາກກົງກັນຂ້າມ ( ບ່ອນທີ່ບໍ່ມີ ການຜະລິດ ), ຈະເປັນປ່າຣົກ ຊຶ່ງເປັນອຸປະສັກໃຫ້ແກ່ການເຕີບໂຕຂອງເບ້ຍໄມ້ສັກ.
- ການປູກໄມ້ຮູບແບບນີ້ ຕ້ອງໄປຄຽງຄູ່ກັບການປູກພືດຄົງທີ່ ແລະ ຕ້ອງທຳການຜະລິດເປັນກຸ່ມໆໄປພ້ອມກັນ ຖ້າບໍ່ດັ່ງນັ້ນ ໄມ້ທີ່ປູກຈະມີຄວາມສ່ຽງຕໍ່ການຖືກທຳລາຍ ຈາກການຖາງ ແລະ ຈູດ. ເວລາທີ່ຄອບຄົວອື່ນກັບມາທຳການຜະລິດຢູ່ເນື້ອທີ່ຂ້າງຄຽງ, ໃນເບື້ອງຕົ້ນການຫັນປ່ຽນລະບົບການຜະລິດນີ້ ອາດຈະມີການຍຸ້ງຍາກ ແລະ ຕ້ອງໄດ້ອອກແຮງປຸກລະດົມຢ່າງຈິງຈັງ ຢ່າງໃດກໍຕາມ, ຈາກຈຳນວນຕົ້ນໄມ້ ທີ່ເຫຼືອ ແລະ ອັດຕາການເຕີບໂຕ ເຖິງປະຈຸບັນຈະສາມາດຄາດຄະເນໄປ ລ່ວງໜ້າອີກເຖິງ 18 ຫຼື 20 ປີໄດ້, ເວລານັ້ນ ຖ້າຫາກໄມ້ສັກທີ່ໄດ້ປູກອ້ອມເນື້ອທີ່ທຳການຜະລິດທັງໝົດ ( ປະມານ 1 ຮຕ ເປີເຊັນລອດຕາຍ 50% ຈະມີ ຫຼາຍກ່ວາ 100 ຕົ້ນ ) ສາມາດຂາຍໄດ້ຫຼາຍກ່ວາ 10 ລ້ານກີບ ພາຍຫຼັງ 18 - 20 ປີ. ຊຶ່ງຖືວ່າເປັນສິ່ງທີ່ ຊາວກະສິກອນ ຄວນຈະໄດ້ນຳໃຊ້ ເພາະເຖິງຢ່າງໃດການປູກໄມ້ ແບບນີ້ບໍ່ໄດ້ເປັນອຸປະສັກ ຕໍ່ການຜະລິດພືດກະສິກຳ ໂດຍສະເພາະໃນບໍລິເວນເນື້ອທີ່ຊຶ່ງໄດ້ຖາງ ຈູດທັງໝົດນັ້ນ ມີບາງ ບ່ອນຊຶ່ງບໍ່ເໝາະກັບ ການປູກພືດກະສິກຳ ( ບ່ອນທີ່ມີ ຫີນຫຼາຍ, ບ່ອນເປັນເຫວຊັນ ແຄມຫ້ວຍ...) ພ້ອມດຽວກັນຖ້າທຸກຄົນ ຫາກນຳໃຊ້ຮູບ ແບບການຜະລິດແບບນີ້ ຈະເຮັດໃຫ້ ທັດສະນີຍະພາບພື້ນທີ່ ມີຄວາມສົມບູນຂຶ້ນ ຢ່າງໜ້ອຍກໍເພີ່ມຄວາມ ຫຼາກຫຼາຍ ທາງຊີວະນາໆພັນຂຶ້ນ ໃນລະດັບ ໃດນຶ່ງ.

ໂດຍ: 1. ທ. ສົມພະຈັນ ວົງພະສຸວັນ ສູນຄົ້ນຄ້ວາປ່າໄມ້ ໂທ: 020 5774103
2. ທ. ຄຳຫຼ້າ ລັດສະໝີ ປະສານງານປະຈຳເມືອງ ໂພນໄຊ 020 5894185

# ການປູກຢາງບົງ ແລະ ເປືອກເມືອກໃນພື້ນທີ່ປ່າເລົ່າຄ້ອຍຊັນ.



ຢາງບົງ ແລະ ເປືອກເມືອກ ແມ່ນໜຶ່ງໃນຊະນິດພັນເຄື່ອງປ່າຂອງດົງ ທີ່ມີຄວາມສຳຄັນ ແລະ ມີຄຸນຄ່າທາງດ້ານເສດຖະກິດຂອງຊາດ, ໂດຍສະເພາະແມ່ນການປະກອບສ່ວນຍົກລະດັບຊີວິດການເປັນຢູ່ ຂອງປະຊາຊົນໃນຊົນນະບົດໃຫ້ດີຂຶ້ນ.

ຕົ້ນຢາງບົງ ມີການກະຈາຍພັນຢູ່ຫຼາຍປະເທດໃນອາຊີຕາເວັນ ອອກສ່ຽງໄຕ້. ປະເທດລາວ ແມ່ນພົບເຫັນແຕ່ເໜືອເຖິງໃຕ້ ທີ່ ສາມາດເກີດໄດ້ຢູ່ໃນລະດັບຄວາມສູງຈາກໜ້ານ້ຳທະເລ ແຕ່ 200 -1200 m

ຄຸນປະໂຫຍດຂອງຕົ້ນຢາງບົງ ແມ່ນ ເປືອກນຳໃຊ້ເຮັດທູບບູຊາ, ທູບກັນຍຸງ, ໃຊ້ຕາບ ຫຼື ຈອດຮອຍຮົ່ວ, ໃນສະໄໝບູຮານໄດ້ນຳໃຊ້ເປືອກບົງປະສົມກັບດິນ ເພື່ອປັ້ນເປັນຮູບ ຕ່າງໆ ຫຼື ໃຊ້ຫຼໍ່ພະພຸດທະຮູບໃສ່ວັດວາອາຮາມ ແລະ ສຳລັບໃຊ້ໃນຄົວເຮືອນ ແມ່ນເຮັດເຄື່ອງໃຊ້ສອຍຕ່າງໆ ເຊັ່ນ : ນຳໃຊ້ຢາງປະສົມເພື່ອ ປັ້ນໝໍ້, ຫຼໍ່ໄຫ ແລະ ອື່ນໆ. ໃນໄລຍະປີ 1995 - 1999 ປະເທດລາວ ໄດ້ສົ່ງອອກເປືອກບົງແຫ້ງໃຫ້ແກ່ ໄທ ແລະ ຫວຽດນາມ ສະເລ່ຍ 325 ໂຕນ/ປີ ສາມາດສ້າງລາຍຮັບໄດ້ສະເລ່ຍ 93,578 USD.

ເປືອກເມືອກກໍ່ເຊັ່ນດຽວກັນ ໄດ້ມີການກະຈາຍພັນຢູ່ໃນຫຼາຍປະເທດອາຊີຕາເວັນອອກສ່ຽງໄຕ້. ປະເທດລາວ ແມ່ນພົບເຫັນຢູ່ໃນເຂດພາກເໜືອ ເກີດຢູ່ໃນລະດັບຄວາມສູງຈາກລະດັບໜ້ານ້ຳທະເລ 400 - 800 m. ມັກເກີດຢູ່ໃນພື້ນທີ່ແຄມນ້ຳ, ດິນມີຄວາມອຸດົມສົມບູນ ຕາມເນີນພູຂອງປ່າດົງດິບທີ່ມີຄວາມຊຸ່ມຊື່ນສູງ. ເປືອກເມືອກນຳໃຊ້ເປັນຢາສະໝຸນໄພຮັກສາພະຍາດ, ເຮັດກາວ, ທູບໄລ່ຍຸງ. ເປືອກເມືອກເປັນສິນຄ້າສົ່ງອອກຂາຍໄປ ປະເທດຈີນ. ( ວິຈິດ ລຳໄຊ, 2005 )



ປະຈຸບັນ ປະລິມານຢາງບົງ ແລະ ເປືອກເມືອກ ໃນປ່າທຳມະຊາດໄດ້ຫຼຸດລົງ ແຕ່ຄວາມຕ້ອງການໃນການບໍລິໂພກຂອງຕະຫຼາດເພີ່ມຂຶ້ນ, ສະນັ້ນ ການປູກຢາງບົງ ແລະ ເປືອກເມືອກ ໃນພື້ນທີ່ປ່າເລົ່າ ແມ່ນເພື່ອຮັບປະກັນ ແລະ ເພີ່ມຜົນຜະລິດຈາກໄມ້ດັ່ງກ່າວໃຫ້ມີຄວາມຍືນຍົງ ໂດຍຫຼຸດຜ່ອນປະລິມານການຂຸດຄົ້ນຈາກປ່າທຳມະຊາດໃນອະນາຄົດ, ພ້ອມດຽວກັນກໍ່ເພື່ອຮັບປະກັນການສ້າງລາຍຮັບ ໃຫ້ແກ່ຄອບຄົວຊາວກະສິກອນ ໃນເຂດພູດອຍໃຫ້ມີຄວາມໝັ້ນຄົງ.

# ຂັ້ນຕອນທາງດ້ານເຕັກນິກວິທີການ

## 1. ໄລຍະປູກ :




ຮູບສະແດງການປູກຢາງບິງ ແລະ ເປືອກເມືອກ x = ແຖວຢາງບິງ;
O = ແຖວເປືອກເມືອກ

ຮູບແບບການປູກ ຕົ້ນຢາງບິງ ແລະ ເປືອກເມືອກ ແມ່ນ ປູກແບບສະຫຼັບແຖວກັນ ໝາຍຄວາມວ່າ ແຖວທີ 1 ປູກຢາງບິງ, ແຖວທີ 2 ປູກເປືອກເມືອກ ເຮັດແບບນີ້ຈົນເຕັມພື້ນທີ່. ໄລຍະຫ່າງການປູກ ຫຼື ລະຫວ່າງຂຸມ ຕໍ່ຂຸມ ແມ່ນ 3x3 ແມັດ

## 2. ການກະກຽມແນວພັນ

- ເບ້ຍໄມ້ ທີ່ຈະນຳມາປູກທັງ 2 ຊະນິດ ແມ່ນ ໃຫ້ມີຄວາມສູງ ບໍ່ໃຫ້ຕ່ຳກ່ວາ 30 ຊັງຕີແມັດ, ເບ້ຍໄມ້ຕ້ອງມີຄວາມແຂງແຮງ ແລະ ບໍ່ມີພະຍາດ.

## 3. ການຂຸດຂຸມປູກ :

- ກ່ອນອື່ນໝົດ ແມ່ນອະນາໄມພື້ນທີ່ ໂດຍການຕັດຖາງ, ຂຸດໄມ້ ອອກໃຫ້ໝົດ ( ຍົກເວັ້ນເປືອກເມືອກເບິ່ງໃນຂໍ້ແນະນຳ ຂໍ້ 8).
- ຕົ້ນຢາງບິງ : ຂະໜາດຂອງຂຸມປູກ 30x 30 x30 ຊັງຕີແມັດ
- ເປືອກເມືອກ : ຂະໜາດຂອງຂຸມປູກ 20x20x20 ຊັງຕີແມັດ. ພາຍຫຼັງຂຸດຂຸມປູກແລ້ວ ແມ່ນໃຫ້ຕາກແດດປະມານ 7-8 ວັນ ແລ້ວຈິ່ງລົງມືປູກ.

## 4. ການປູກ :



ກ່ອນປູກນຳໃຊ້ຝຸ່ນຄອກຮອງພື້ນໃນອັດຕາສ່ວນ 0.5 ກິໂລກຼາມ / ຂຸມ ຫຼື ໃສ່ໃຫ້ພໍດີກັບຂະໜາດຂອງຂຸມ ເພື່ອງາຍໃນ ການຊອກຫາອາຫານໃນເວລາຕົ້ນໄມ້ຍັງນ້ອຍ. ຫຼັງຈາກນັ້ນ ນຳເອົາເບ້ຍໄມ້ທີ່ກຽມໄວ້ລົງປູກ ໂດຍຈີກ ຫຼື ດຶງເບົ້າຢາງອອກ ຢ່າງລະມັດລະວັງບໍ່ໃຫ້ ດິນແຕກ ແລ້ວນຳເອົາດິນຊັ້ນໜ້າລົງຖົມ ແລະ ຢຽບໃຫ້ແໜ້ນ ເພື່ອ ປ້ອງກັນບໍ່ໃຫ້ນ້ຳຂັງ ໃນເວລາຝົນຕົກ. ສຳລັບການປູກພືດກະສິກຳສັບຫວ່າງ ແມ່ນຄວນປູກໃຫ້ຫ່າງ ຈາກຕົ້ນໄມ້ບໍ່ໃຫ້ຫຼຸດ 50 ຊັງຕີແມັດ ເພື່ອບໍ່ໃຫ້ພືດສາມາດ ຍາດແຍ່ງທາດອາຫານຈາກຕົ້ນໄມ້.



## 5. ການບົວລະບັດຮັກສາສວນປູກ :

ພາຍຫຼັງປູກແລ້ວ ເຈົ້າຂອງສວນປູກຄວນເອົາໃຈໃສ່ໃນການເສຍຫຍ້າ ໃນຊ່ວງເວລາຕົ້ນໄມ້ຍັງນ້ອຍຢ່າງຕ່ຳບໍ່ໃຫ້ຫຼຸດ 2 ຄັ້ງຕໍ່ປີ. ການເສຍຫຍ້າອ້ອມຕົ້ນໄມ້ໃຫ້ຫ່າງປະມານ 1 ແມັດ, ພາຍຫຼັງການປູກໃນກໍລະນີຫາກຝົນບໍ່ຕົກ ເຈົ້າຂອງສວນຕ້ອງຫົດນ້ຳ ອາທິດລະ 1

ຄັ້ງ ແລະ ຄວນນຳເອົາເສດໄມ້ ຫຼື ສິ່ງເສດເຫຼືອທີ່ຫາໄດ້ງ່າຍ ມາປົກຄຸມເຫງົ້າໄມ້ເພື່ອເປັນການຮັກສາຄວາມຊຸ່ມຊື່ນໃນດິນ.

## 6. ການຈະເລີນເຕີບໂຕຂອງຢາງບົງ :

ຜົນຈາກການສຶກສານີ້ໄດ້ຊີ້ໃຫ້ເຫັນວ່າ ຕົ້ນຢາງບົງ ສາມາດຈະເລີນເຕີບໄດ້ດີ ໃນພື້ນທີ່ມີຄວາມຄ້ອຍຊັນແຕ່ 15 - 30 ອົງສາ ( ຍົກເວັ້ນດິນຮາບພຽງ ), ເຊິ່ງຕົ້ນຢາງບົງອາຍຸໄດ້ 16 ເດືອນ ມີເປີເຊັນການລອດຕາຍເທົ່າກັບ 73.2% ໃນນັ້ນໜ້າຕ້າງສະເລ່ຍຕ່ຳສຸດ 0.55 ຊັງຕີແມັດ ແລະ ສູງສຸດ 2.4 ຊັງຕີແມັດ, ຄວາມສູງ ສະເລ່ຍສູງສຸດເທົ່າກັບ 65,46 ຊັງຕີແມັດ ແລະ ຕ່ຳສຸດ ເທົ່າກັບ 35.66 ຊັງຕີແມັດ. ເຖິງຢ່າງໃດກໍ່ຕາມ ຕົ້ນຢາງບົງ ຖ້າ ຫາກໄດ້ຮັບການ ບົວລະບັດຮັກສາດີ ຢ່າງເປັນໄລຍະ, ຜົນທີ່ໄດ້ຮັບນັ້ນ ແນ່ນອນຕ້ອງເປັນທີ່ໜ້າເພິ່ງພໍໃຈ.



## 7. ການຈະເລີນເຕີບໂຕຂອງເປືອກເມືອກ :

ເປືອກເມືອກ ສາມາດຈະເລີນເຕີບໂຕໄດ້ດີໃນພື້ນທີ່ດິນມີຄວາມຊຸ່ມຊື່ນສູງ ເຊັ່ນ: ພື້ນທີ່ຕາມແຄມຫ້ວຍ ຫຼື ຕາມຮອມພູ. ເປືອກເມືອກ ບໍ່ສາມາດຂະຫຍາຍຕົວໄດ້ ໃນພື້ນທີ່ແຫ້ງແລ້ງ ດິນຂາດຄວາມອຸດົມສົມບູນ ແລະ ໃນພື້ນທີ່ປອກໂລ້ນ ດັ່ງຜົນການສຶກສາໄດ້ຊີ້ໃຫ້ເຫັນວ່າ ການປູກເປືອກເມືອກ ໃນພື້ນທີ່ປ່າເລົ່າຄ້ອຍຊັນ ມີອາຍຸ ໄດ້ 16 ເດືອນ ສະເລ່ຍເປີເຊັນການລອດຕາຍ 8.9%. ແຕ່ເຖິງ ຢ່າງໃດກໍ່ຕາມ ເປືອກເມືອກກ່ອນທີ່ຈະ ຈະເລີນເຕີບໂຕໄດ້ດີແມ່ນມີຫຼາຍປັດໃຈນອກຈາກຄວາມເໝາະສົມຂອງ ສະພາບພື້ນທີ່ແລ້ວ ແມ່ນຄວາມແຂງແຮງຂອງເບ້ຍໄມ້ນຳອີກ ແລະ ຕ້ອງມີຄວາມລະມັດລະວັງ ໃນການຂົນສົ່ງເບ້ຍໄມ້ໄປຫາສວນປູກ.

## 8. ຂໍ້ທີ່ຄວນເອົາໃຈໃສ່ :

ສຳລັບຜູ້ທີ່ມີຄວາມສົນໃຈໃນການປູກຢາງບົງ ແລະ ເປືອກເມືອກໃນອະນາຄົດ ແມ່ນມີຄື :

- ເບ້ຍໄມ້ທີ່ນຳມາປູກ ຕ້ອງເປັນເບ້ຍໄມ້ທີ່ແຂງແຮງ ແລະ ສົມບູນ ໂດຍມີຄວາມສູງ ສະເລ່ຍບໍ່ຕ່ຳ ກ່ວາ 30 ຊັງຕີແມັດ.
- ການຂົນສົ່ງເບ້ຍໄປຫາສວນູກ ຕ້ອງມີຄວາມລະມັດລະວັງ ບໍ່ໃຫ້ເບ້ຍໄມ້ຖືກກະທົບກະເທືອນ.
- ຢາງບົງ ສາມາດປູກໄດ້ ໃນພື້ນທີ່ ຮາບພຽງ ຫາ ພື້ນທີ່ໆ ມີຄວາມຄ້ອຍຊັນບໍ່ເກີນ 30 ອົງສາ.
- ເປືອກເມືອກ ແມ່ນ ສາມາດປູກໄດ້ໃນ ພື້ນທີ່ແຄມນ້ຳ, ບ່ອນທີ່ມີຄວາມຊຸ່ມຊື່ນ, ພື້ນທີ່ໆ ມີຄວາມອຸດົມສົມບູນ ແລະ ໄດ້ຮັບແສງແດດ ປະມານ 40 -5 0% ( ກ້ອງປ່າໄມ້ )
- ອະນາໄມພື້ນທີ່ ( ກຳຈັດວັດສະພືດ ) ປີລະ 2 ຄັ້ງ ຄື : ໃນ ເດືອນ ມິຖຸນາ ແລະ ເດືອນ ທັນວາ.
- ຄວນູກຢາງບົງ ເປັນສວນໜຶ່ງຕ່າງຫາກ ເພາະສະພາບແວດລ້ອມຂອງພືດ 2 ຊະນິດນີ້ ແມ່ນ ມີຄວາມແຕກຕ່າງກັນ.


| | | |
|---|---|---|
| ໂດຍ: 1. ທ. ຄຳພອນ ແສງດາລາ | ສູນຄົ້ນຄ້ວາປ່າໄມ້ | ໂທ: 020 5499292 |
| 3. ທ. ກິແກ້ວ ສີຫາລາດ | ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ | ໂທ: 020 5170963 |
| 4. ທ. ບຸນສະຫວັດ ປານຜາສິດ | ພະນັກງານປະສານງານ ເມືອງ ໂພນໄຊ | |

# ການປູກເສີມກ້ອງປ່າໄມ້ບ້ານ ດ້ວຍເຄື່ອງປ່າຂອງດົງ ທີ່ມີຄຸນຄ່າທາງດ້ານເສດຖະກິດ.



ການນຳເອົາເຄື່ອງປ່າຂອງດົງ ທີ່ມີຄຸນຄ່າທາງດ້ານເສດຖະກິດ ແລະ ມີປະລິມານຫຼຸດນ້ອຍຖອຍລົງ ມາປູກເປັນສິນຄ້າ ແມ່ນ ໜຶ່ງໃນ ຫຼາຍໂຄງການທີ່ສຳຄັນຂອງລັດຖະບານ ທີ່ມີເປົ້າໝາຍ ເສີມສ້າງຄວາມເຂັ້ມແຂງທາງດ້ານລາຍຮັບຂອງປະຊາຊົນ ໃນຊົນນະບົດ ອັນທີ່ຈະກ້າວໄປສູ່ ການສ້າງອາຊີບຄົງທີ່ ເພື່ອຫຼຸດຜ່ອນຄວາມທຸກຍາກໃຫ້ໄດ້ໂດຍພື້ນຖານໃນ ປີ 2010 ແລະ ການຍຸດຕິການຖາງປ່າ ເຮັດໄຮ່ຢ່າງຊິ້ນເຊີງ.

ໝາກແໜ່ງກວາງຕຸງ, ຫວາຍ, ຜັກຫວານ ແລະ ເປືອກເມືອກ ແມ່ນຊະນິດເຄື່ອງປ່າຂອງດົງ ທີ່ມີຄວາມຕ້ອງການຂອງທ້ອງຕະຫຼາດຫຼາຍ. ບັນດາຄຸນປະໂຫຍດຂອງຊະນິດພັນ ເຄື່ອງປ່າຂອງດົງເຫຼົ່ານີ້ ແມ່ນ ສາມາດນຳໃຊ້ໄດ້ຫຼາຍຢ່າງ ເຊັ່ນ : ເປັນອາຫານ, ຢາສະໝຸນໄພ ແລະ ເຄື່ອງໃຊ້ສອຍໃນເຮືອນຕ່າງໆເປັນຕົ້ນ,

ການປູກເສີມກ້ອງປ່າໄມ້ບ້ານ ດ້ວຍເຄື່ອງປ່າຂອງດົງຫຼາຍຊະນິດ ແມ່ນເພື່ອເພີ່ມຄວາມຫຼາກຫຼາຍທາງດ້ານຊີວະນາງພັນ ແລະ ຮັບປະກັນ ການ ຫຼຸດລົງຂອງເຄື່ອງປ່າຂອງດົງດັ່ງກ່າວ ທີ່ມີຢູ່ໃນປ່າທຳມະຊາດ, ເພື່ອສ້າງລາຍຮັບແກ່ປະຊາຊົນ ໂດຍການເກັບກູ້ ເຄື່ອງປ່າຂອງດົງ ຢ່າງຕໍ່ເນື່ອງ ແລະ ມີຜົນຜະລິດທີ່ສະໝໍ່າສະເໝີ



## ຂັ້ນຕອນທາງດ້ານເຕັກນິກວິທີການ

### 1. ໄລຍະປູກ :

| | | | | | | | |
|---|---|---|---|---|---|---|---|
| x | x | x | x | x | x | x | x |
| 0 | 0 | 0 | 0 | 0 | 0 | 0 | 0 |
| # | # | # | # | # | # | # | # |
| x | x | x | x | x | x | x | x |
| 0 | 0 | 0 | 0 | 0 | 0 | 0 | 0 |
| # | # | # | # | # | # | # | # |

ຮູບແບບການປູກເຄື່ອງປ່າຂອງດົງຫຼາຍຊະນິດປະສົມປະສານໃນພື້ນທີ່ດຽວກັນ ແມ່ນປູກສະຫຼັບແຖວ (ຕົວຢ່າງໃນຮູບ) ໝາຍຄວາມວ່າ ແຕ່ລະແຖວມີພຽງຊະນິດພັນດຽວເທົ່ານັ້ນ ໄລຍະຫ່າງການປູກ ຫຼື ລະຫວ່າງຂຸມຕໍ່ຂຸມ ແມ່ນ 3x3 ແມັດ

## 2. ການເປີດແສງ ແລະ ການຂຸດຂຸມປູກ :

- ໃນບໍລິເວນປ່າຊົມໃຊ້ບ້ານ ທີ່ຄັດເລືອກສຳລັບໄວ້ສຳລັບການປູກເສີມກ້ອງປ່າ ກ່ອນອື່ນໝົດ ຕ້ອງໄດ້ອະນາໄມ, ຖາງໄມ້ ທີ່ບໍ່ເປັນເສດຖະກິດອອກໃຫ້ໝົດ ເປີດແສງສະຫວ່າງໃຫ້ໄດ້ປະມານ 50 - 70% ເປີດ ເປັນການ ເປີດແສງໃຫ້ແກ່ຕົ້ນທີ່ນຳໄປປູກ ໃຫ້ໄດ້ຮັບແສງສະຫວ່າງຢ່າງພຽງພໍສຳລັບການສັງເຄາະທາດອາຫານ. ຖ້າຫາກເປີດແສງຕ່ຳກ່ວາ 50% ຕົ້ນທີ່ນຳໄປປູກຊະນິດທີ່ບໍ່ທົນທານກັບຮົ່ມຈະບໍ່ສາມາດຈະເລີນເຕີບໂຕໄດ້ດີ, ເຖິງຢ່າງໃດກໍ່ຕາມ, ຫາກມີຈຸດປະສົງທີ່ຈະບໍ່ຕັດສາງ ເພື່ອເປີດແສງແລ້ວ; ຜູ້ປູກຄວນຈະຄັດເລືອກເອົາແນວພັນໄມ້ທີ່ມີຄວາມທົນທານຕໍ່ກັບຮົ່ມ.
- ສຳລັບການຂຸດຂຸມປູກຂອງເຄື່ອງປ່າຂອງດົງແຕ່ລະຊະນິດ ແມ່ນຂຸດໃຫ້ໄດ້ຂະໜາດ 20x20x20 ຊັງຕີແມັດ. ພາຍຫຼັງຂຸດຂຸມປູກແລ້ວ ແມ່ນໃຫ້ຕາກແດດປະມານ 7-8 ວັນ ແລ້ວຈຶ່ງລົງມືປູກ.

## 3. ການປູກ :

ກ່ອນປູກນຳໃຊ້ຝຸ່ນຄອກຮອງພື້ນໃນອັດຕາສ່ວນ 0.5 ກິໂລ ກຼາມ / ຂຸມ ຫຼື ໃສ່ໃຫ້ພໍດີກັບຂະໜາດຂອງຂຸມ ເພື່ອງາຍໃນ ການຊອກຫາອາຫານໃນເວລາຕົ້ນໄມ້ຍັງນ້ອຍ. ຫຼັງຈາກນັ້ນ ນຳເອົາເບ້ຍໄມ້ທີ່ກຽມໄວ້ລົງປູກ ໂດຍຈີກ ຫຼື ດຶງເບົ້າຢາງອອກ ຢ່າງລະມັດ ລະວັງ ບໍ່ໃຫ້ ດິນແຕກ ແລ້ວນຳເອົາດິນຊັ້ນໜ້າລົງຖົມ ແລະ ຢຽບໃຫ້ແໜ້ນ ເພື່ອ ປ້ອງກັນບໍ່ໃຫ້ນ້ຳຂັງ ໃນເວລາຝົນຕົກ..



## 4. ການບົວລະບັດຮັກສາສວນປູກ :



ພື້ນທີ່ປ່າໄມ້ຊົມໃຊ້ບ້ານ ແມ່ນຂອງລວມບ້ານ, ສະນັ້ນການບົວລະບັດຮັກສາ ແມ່ນຂອງປະຊາຊົນໝົດທຸກຄົນພາຍໃນບ້ານ. ພາຍຫຼັງປູກແລ້ວ ປະຊາຊົນຄວນເອົາໃຈໃສ່ໃນການເສຍຫຍ້າ ໃນຊ່ວງເວລາຕົ້ນໄມ້ຍັງນ້ອຍຢ່າງຕ່ຳບໍ່ໃຫ້ຫຼຸດ 2 ຄັ້ງຕໍ່ປີ. ການເສຍຫຍ້າອ້ອມຕົ້ນໄມ້ໃຫ້ຫ່າງປະມານ 1 ແມັດ ແລະ ເອົາໃຈໃສ່ໃນການເປີດແສງໃຫ້ແກ່ຕົ້ນໄມ້ຢ່າງເປັນປະຈຳ . ພາຍຫຼັງການປູກ ໃນກໍລະນີ ຫາກຝົນບໍ່ຕົກ ປະຊາຊົນຕ້ອງຫົດນ້ຳອາທິດລະ 1 ຄັ້ງ ແລະ ຄວນນຳເອົາ ເສດໄມ້ ຫຼື ສິ່ງເສດເຫຼືອທີ່ຫາໄດ້ງ່າຍມາປົກຄຸມເຫງົ້າໄມ້ ເພື່ອເປັນ ການຮັກສາຄວາມຊຸ່ມຊື່ນໃນດິນ.

## 5. **ຜົນການຈະເລີນເຕີບໂຕ** :

ຜົນຈາກການສຶກສານີ້ໄດ້ຊີ້ໃຫ້ເຫັນວ່າ ຕົ້ນເຄື່ອງປ່າຂອງດົງແຕ່ລະຊະນິດທີ່ໄດ້ປູກ ແມ່ນບໍ່ສາມາດຈະເຈີນເຕີບໂຕໄດ້ດີເທົ່າທີ່ຄວນ ເນື່ອງຈາກຕົ້ນໄມ້ບໍ່ໄດ້ຮັບແສງເທົ່າທີ່ຄວນ ຍ້ອນວ່າການບົວລະບັດຮັກສາ ແມ່ນບໍ່ໄດ້ດີເທົ່າທີ່ຄວນຫວາຍ ແມ່ນເປີເຊັນການລອດຕາຍ ເທົ່າກັບ 70%, ແລະ ຊະນິດອື່ນໆ ແມ່ນຕາຍຫຼາຍ ສະເລ່ຍເປີເຊັນການລອດຕາຍປະມານ 10%.

## 6. **ຂໍ້ທີ່ຄວນເອົາໃຈໃສ່** :

ການປູກຊະນິດພັນເຄື່ອງຂອງດົງໃນກ້ອງປ່າໄມ້ ສິ່ງທີ່ສຳຄັນ ຕ້ອງໄດ້ມີການຕິດຕາມ ແລະ ເອົາໃສ່ໃນການເປີດແສງສະຫວ່າງບໍ່ໃຫ້ຫຼຸດ 50% ຢູ່ຕະຫຼອດ ຖ້າບໍ່ດັ່ງນັ້ນ ຕົ້ນໄມ້ທີ່ປູກຈະຂະຫຍາຍຕົວຊ້າ ຫຼື ບໍ່ຂະຫຍາຍຕົວເລີຍ.

- ຕົ້ນໄມ້ແຕ່ລະຊະນິດ ແມ່ນສາມາດນຳໄປແບບດ່ຽວໄດ້.
- ກຳຈັດວັດສະພືດ ປີລະ 2 ຄັ້ງ ( ເດືອນ 6 ແລະ ເດືອນ 12 )
- ແນວພັນທີ່ນຳມາປູກຕ້ອງມີຄວາມແຂງແຮງ ແລະ ສົມບູນດີ
- ຕ້ອງມີຄວາມລະມັດລະວັງໃນການຂົນສົ່ງ.


| | | |
|---|---|---|
| ໂດຍ: 1. ທ. ຄຳພອນ ແສງດາລາ | ສູນຄົ້ນຄ້ວາປ່າໄມ້ | ໂທ:020 5499292 |
| 2. ທ. ກິແກ້ວ ສີຫາລາດ | ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ | ໂທ:020 5170963 |
| 3. ທ. ຈັນໄຕ ວົງພະຈັນ | ພະນັກງານປະສານງານ ເມືອງ ໂພນໄຊ | |
| 4. ທ. ສຸລິວັນ ວັນນະສຸກ | ພະນັກງານປະສານງານ ເມືອງ ນາໝໍ້ | |

# ການປູກຂີງດຳ ( *Boesenbergia sp* ) ແບບປະສົມປະສານກັບພືດກະສິກຳ ທີ່ ເມືອງໂພນໄຊ, ແຂວງຫຼວງພະບາງ

ຂີງດຳ ນອນຢູ່ໃນວົງຕະກຸນ Zingiberaceae ຊື່ວິທະຍາສາດແມ່ນ *Boesenbergia SPP* ມີຖິ່ນກຳເນີດຢູ່ໃນ ເອເຊຍ ເຂດຮ້ອນ ເຕີບໂຕໄດ້ໃນເຂດປ່າຊື້ນປຽກຊຸ່ມ, ດິນຟຸຍຸ່ຍ, ດິນປົນຊາຍ ເປັນພືດລົ້ມລຸກ ລຳຕົ້ນເປັນກາບກ້ານໃບໂອບ ຂຶ້ນສູງປະມານ 20-50 ຊັງຕີແມັດ. ຫົວເປັນສີມ່ວງດຳ, ມີກິ່ນທີ່ມີສານນຳໄປສະກັດເປັນຢາສະໝຸນໄພເຊັ່ນ: ຢາບຳລຸງຮ່າງກາຍ, ຢາດີທ້ອງຍື່ງເປັນຕົ້ນ. ໃນປະຈຸບັນຂີງດຳນິຍົມກັນປູກຫຼາຍຢູ່ ແຂວງບໍລິຄຳໄຊ, ນະຄອນຫຼວງວຽງຈັນ, ເຂດເມືອງວັງວຽງ, ແຂວງວຽງຈັນ, ແຂວງໄຊຍະບູລີ, ແຂວງອຸດົມໄຊ ແລະ ແຂວງຫຼວງພະບາງ. ຂີງດຳຂະ ຫຍາຍພັນດ້ວຍຫົວໂດຍນຳເອົາຫົວຂີງມາອາ ນາໄມແກະສ່ວນທີ່ເປັນຫົວເກົ່າອອກແລ້ວ ເອົາຫົວທີ່ໃໝ່ມາຕັດ ຂະໜາດເທົ່ານິ້ວມືຕາມບ່ອນທີ່ມີຕາແລ້ວນຳໄປປູກ ໃນຊ່ວງຕົ້ນລະດູຝົນ ( ເດືອນ 4-5 ) ແລະ ເກັບກູ້ຫຼັງຈາກປູກໄດ້ 7 ເດືອນ (ເດືອນ 11-12 ) ( ສະໝຸນໄພໃນຄົວ ຮສ. ດຣ ວັນດີ ກິດສະພັນ 2541, ພືດສະໝຸນໄພ ນິດສິຖີ ເຣືອງຣັງສີ 2534, ປູກສະໝູນໄພໃຊ້ເອງ ພະຍອມ ຈອມພິທັກ 2537 ). ຄຸນປະໂຫຍດຂອງຂີງດຳ ແມ່ນສາມາດນຳ ມາປຸງແຕ່ງ ເປັນຢາສະໝຸນໄພ ເຊັ່ນ : ໃຊ້ສຳລັບເປັນຢາແກ້ເຈັບທ້ອງ, ແກ້ທ້ອງຍື່ງ ແລະ ຢາບຳລຸງກຳລັງ.

## ຂັ້ນຕອນທາງດ້ານເຕັກນິກວິທີການ

### 1. ການກະກຽມເນື້ອທີ່:

ເນື້ອທີ່ແມ່ນເປັນຂອງປະຊາຊົນໂດຍເອົາເນື້ອທີ່ໄຮ່ທີ່ປະຊາຊົນໄດ້ປູກພືດກະສິກຳ ເຊັ່ນ: ເຂົ້າ, ໝາກງາ, ສາລີ ແລະ ໝາກເດືອຍ. ເນື້ອທີ່ຂອງແຕ່ລະຄອບຄົວແມ່ນກຳນົດເອົາ 40x40 ແມັດ ເທົ່າກັບ 1.600 ຕາແມັດ. ການກະກຽມດິນປູກແມ່ນໄດ້ເຮັດ 2 ວິທີ ຄື: ວິທີ 1 ແມ່ນໄດ້ຂຸດດິນເຮັດເປັນໜານ ຫຼື ຄັນຄູກ້ວາງ 1 ແມັດ ແລະ ຍາວ 40 ແມັດ ຕາມແລວເສັ້ນລະດັບແລ້ວຈຶ່ງໄລຍະຫ່າງລະຫວ່າງສິ້ນຄັນຄູຕໍ່ຄັນຄູແມ່ນ 3 ແມັດ ເພື່ອປູກພືດກະສິກຳສັບຫ່ວາງ. ວິທີ 2 ແມ່ນບໍ່ໄດ້ຂຸດດິນ ແລະ ບໍ່ໄດ້ເຮັດເປັນຄັນຄູໝາຍ ຄວາມວ່າມີແຕ່ຂຸດປູກຂີງດຳໃສ່ເລີຍ.

### 2. ໄລຍະການປູກ:

ໄລຍະຫ່າງລະຫວ່າງຂຸມປູກແມ່ນ 50x50 ຊັງຕີແມັດ. ຂະໜາດຂອງຂຸມປູກແມ່ນ 15x15x15 ຊັງຕີແມັດ.

### 3. ການປູກ:

ຄວນປູກຂີງດຳ ໃນຕົ້ນລະດູຝົນ ( ເດືອນ4-5 ) ແລະ ຕ້ອງຂຸດຂຸມປູກໃຫ້ໄດ້ຕາມມາດຕະຖານທີ່ກຳນົດໄວ້ ຄື: 15x15x15 ຊັງຕີແມັດ ແລ້ວນຳເອົາຫົວຂີງດຳທີ່ກະກຽມໄວ້ນັ້ນລົງຂຸມ ໂດຍປິ່ນເບື້ອງທີ່ມີຕານັ້ນຂຶ້ນແລ້ວເອົາດິນຖົມໃຫ້ແໜ້ນພໍດີ.

### 4. ການບົວລະບັດຮັກສາ:

ພາຍຫຼັງປູກຂີງດຳໄດ້ 1 ເດືອນຂຶ້ນໄປຄວນສຳຫຼວດເບິ່ງເປີເຊັນການລອດຕາຍ ແລະ ການຂະຫຍາຍຕົວຂອງວັດສະພືດ (ຫຍ້າ) ທີ່ປົກຄຸມຂີງດຳ. ຄວນເສັຽຫຍ້າອອກຈາກຂີງດຳເດືອນລະຄັ້ງ ຍິ່ງເປັນການດີເພາະວ່າ ຂີງດຳມີຮອບວຽນການເກັບກູ້ສັ້ນ.

## 5. ການເກັບກູ້ :

ການເກັບກູ້ຂີງດຳແມ່ນຫຼັງຈາກປູກໄດ້ 7 ເດືອນ ກໍສາມາດເກັບກູ້ໄດ້. ວິທີການເກັບກູ້ແມ່ນນຳໃຊ້ສຽມຄ່ອຍໆ ຂຸດເອົາຫົວຂີງດຳ ຂຶ້ນມາອານາໄມ ແລະ ສ້ອມຮາກອອກໃຫ້ໝົດແລ້ວນຳເອົາຂີງໃສ່ເປົາທີ່ກຽມໄວ້ເພື່ອສະດວກໃຫ້ແກ່ການຂົນສົ່ງ. ຖອກຂີງດຳ ອອກຈາກເປົາຕາກໃຫ້ແຫ້ງພໍປະມານ 10-15 ວັນ ຫຼັງຈາກນັ້ນຈຶ່ງເອົາຂີງດຳເກັບຮັກສາໄວ້ໃນເປົາ ບ່ອນທີ່ມີອາກາດຖ່າຍເທດີ ພໍຮອດຕົ້ນລະດູຝົນປີຕໍ່ໄປຈຶ່ງນຳຂີງດຳທີ່ເກັບຮັກສາໄວ້ນັ້ນໄປປູກ ( ຄວນຄັດ ເລືອກເອົາຫົວຂີງດຳທີ່ໃຫຍ່ ແລະ ມີຄວາມສົມບູນດີທີ່ສຸດໄປປູກ ). ຂໍ້ຄວນລະວັງໃນຊ່ວງໄລຍະເວລາ ເກັບຮັກສາຂີງດຳຢູ່ນັ້ນບໍ່ໃຫ້ຂີງດຳສຳພັດກັບຄວາມປຽກຊຸ່ມ ເພາະຈະເຮັດໃຫ້ຂີງດຳ ແຕກໜໍ່ກ່ອນລະດູການປູກ.

## 6. ຜົນໄດ້ຮັບຈາກການທົດລອງ

ຜ່ານການປູກຂີງດຳທົດລອງໃນເນື້ອທີ່ໄຮ່ຂອງຊາວກະສິກອນເຂດພູດອຍສາມາດສະຫຼຸບຜົນໄດ້ຮັບດັ່ງນີ້:

- ຜົນຜະລິດຂອງຂີງດຳເພີ່ມຂຶ້ນ 70% ຂອງແນວພັນ.
- ການສົມທຽບລະຫວ່າງການປູກຂີງດຳໃສ່ໜານ(ຄັນຄູ) ແລະ ການປູກຂີງດຳແບບບໍ່ເຮັດເປັນໜານເຫັນວ່າວິທີປູກໃສ່ໜານຄັນ ຄູມີຜົນຜະລິດສູງກ່ວາ ແລະ ມີຄວາມແຕກຕ່າງກັນ 10-20%.
- ສ່ວນຜົນຜະລິດຂອງຂີງດຳ ທີ່ໄດ້ປູກແບບປະສົມປະສານກັບສາລີແມ່ນມີຜົນຜະລິດດີກ່ວາປູກປະສົມກັບໝາກເດືອຍ ແລະ ໝາກງາ.
- ຜົນຜະລິດຂອງຂີງດຳສະເລ່ຍຕໍ່ຄອບຄົວແມ່ນໄດ້ປູກ 80 ກິໂລຕໍ່ຄອບຄົວ ແລະ ຜົນໄດ້ຮັບສະເລ່ຍ 131,2 ກິໂລຕໍ່ຄອບຄົວ. ສຳລັບຜົນຜະລິດຂອງຂີງດຳໄດ້ມອບໃຫ້ເຈົ້າຂອງສວນຈຳນວນ 75% ຂອງຜົນຜະລິດທີ່ໄດຮັບ ອີກ 15% ແມ່ນໄດ້ເອົາຄືນມາເພື່ອເປັນແນວພັນສຳລັບປູກໃໝ່. ສ່ວນຜົນຜະລິດຂອງພືດກະສິກຳອື່ນໆຂອງປະຊາຊົນທີ່ປູກໃນສວນດັ່ງກ່າວນັ້ນແມ່ນມອບໃຫ້ເຈົ້າຂອງສວນທັງໝົດ.


| | | |
|---|---|---|
| ໂດຍ: 1. ທ. ບັນຊາ ທຳມະວົງ | ສູນຄົ້ນຄ້ວາປ່າໄມ້ | ໂທ: 020 2208283 |
| 2. ທ. ສີງກອນ ໄຊຍະລາດ | ສູນຄົ້ນຄ້ວາປ່າໄມ້ | ໂທ: 020 5323409 |
| 3. ທ. ຄຳຫຼ້າ ລັດສະໝີ | ພະນັກງານປະສານງານ ເມືອງ ໂພນໄຊ | |

# ການປູກຫວາຍເພື່ອເອົາຍອດ



ຂະບວນການປູກຫວາຍ ເພື່ອເອົາຍອດ ແມ່ນໄດ້ມີການເລີ່ມຂຶ້ນໃນຊຸມປີ 1990 ເຊິ່ງໂດຍສ່ວນໃຫຍ່ ແມ່ນເປັນສວນປູກຂອງປະຊາຊົນ ແລະ ສ່ວນໜຶ່ງ ແມ່ນ ຂອງໂຄງການ ແຕ່ການປູກ ແມ່ນໄດ້ ມີການຂະຫຍາຍຕົວແຕ່ຢູ່ໃນພາກກາງໂດຍສະເພາະ ແມ່ນ ນະຄອນຫຼວງວຽງຈັນ, ຫວາຍແຍ້ ແມ່ນໜຶ່ງໃນຫຼາຍຊະນິດພັນຫວາຍ ທີ່ມີຜົນປະໂຫຍດ ນອກຈາກການນຳໃຊ້ລຳ ເຮັດເຄື່ອງເຟີນີເຈີ ແລະ ເຄື່ອງຮັບໃຊ້ຕ່າງໆໃນຄົວເຮືອນແລ້ວ ພາກສ່ວນຍອດ ແມ່ນຍັງສາມາດນຳມາເປັນທີ່ນິຍົມເຮັດອາຫານ,ສຳລັບການປູກ ຫວາຍແຍ້ໃນເຂດພາກເໜືອແມ່ນຍັງບໍ່ທັນໄດ້ມີການຂະຫຍາຍຕົວ ເຊິ່ງສ່ວນໃຫຍ່ແມ່ນນຳໃຊ້ຫວາຍໃນປ່າທຳມະຊາດ. ເຖິງຢ່າງໃດກໍ່ຕາມການປູກຫວາຍແມ່ນສາມາດປູກໄດ້ຊຶ່ງມີລາຍລະອຽດຕໍ່ໄປນີ້:

## ຂັ້ນຕອນທາງດ້ານເຕັກນິກວິທີການ



### 1. ໄລຍະຫ່າງການປູກ

ໄລຍະຫ່າງຂອງການປູກແມ່ນ 2x3 ແມັດ ແລະ ສຳລັບພື້ນທີ່ ທີ່ຈະທຳການປູກຫວາຍ ແມ່ນຕ້ອງຢູ່ໃກ້ແຄມນ້ຳ ແລະ ສາມາດຮັບແສງສະຫວ່າງໄດ້ພຽງພໍ.

### 2. ການຂຸດຂຸມປູກ

ກ່ອນອື່ນໝົດຕ້ອງມີການອະນາໄມ້ພື້ນທີ່ ໂດຍຖາງໄມ້, ຈູດເຜົາເສດໄມ້ ອອກໃຫ້ໝົດ. ຂຸມປູກທີ່ເໝາະສົມແມ່ນຂຸດໃຫ້ໄດ້ຂະໜາດ ປະມານ 20x20 ຊັງຕີແມັດ

### 3. ການປູກ

ພາຍຫຼັງທີ່ກະກຽມເບ້ຍຫວາຍ ໂດຍການຂົນສົ່ງມາຍັງ ສວນປູກແລ້ວ ຊຶ່ງເບ້ຍຫວາຍຕ້ອງມີຄວາມສູງປະມານ 30 ຊັງຕີແມັດ ແລະ ຕ້ອງເປັນເບ້ຍທີ່ມີຄວາມແຂງແຮງດີ. ກ່ອນອື່ນໝົດ ແມ່ນໃຊ້ມີດປາດເບົ້າທີ່ເປັນພັດສະຕິກອອກ ແລ້ວນຳລົງປູກໃນຂຸມທີ່ໄດ້ກະກຽມໄວ້ແລ້ວ ຢຽບໃຫ້ແໜ້ນ,

### 4. ການບົວລະບັດຮັກສາ

ພາຍໃນໄລຍະປີທຳອິດ ສ່ວນຫຼາຍ ແມ່ນສາມາດປູກພືດກະສິກຳສັບຫວ່າງໄດ້ເຊັ່ນ: ເຂົ້າ, ສາລີ ແລະ ອື່ນໆ ສຳລັບການກຳຈັດວັດສະພືດ ແມ່ນ ສາມາດເຮັດໄດ້ 2 ຄັ້ງ/ປີ ແລະ ໃສ່ຝຸ່ນຊີວະພາບ 2 ຄັ້ງ/ປີ ( ເດືອນ 6 ແລະ 12 )

## 5. ການຈະເລີນເຕີບໂຕ

ຜົນການທົດລອງປູກຫວາຍທີ່ບ້ານ ທ່າໂພ ເມືອງ ໂພນໄຊ  ແຂວງ ຫຼວງພະບາງ ແລະ ບ້ານ ມີໄຊ ເມືອງນາໝໍ້ ແຂວງ ອຸດົມໄຊ ໄດ້ຊີ້ໃຫ້ເຫັນວ່າ ຕົ້ນຫວາຍ ມີຄວາມສູງສະເລ່ຍປະມານ 1,47 ແມັດ ແລະ ຈຳນວນໜໍ່ທີ່ແຕກໃໝ່ ສະເລ່ຍ ເທົ່າກັບ 10 ໜໍ່/ສຸມ ແລະ ໃນປີທີ 3 ຫວາຍ ແມ່ນສາມາດເກັບກ່ຽວຜົນຜະລິດໄດ້.


| | | |
|---|---|---|
| ໂດຍ: 1. ທ. ຄຳພອນ ແສງດາລາ | ສູນຄົ້ນຄ້ວາປ່າໄມ້ | ໂທ:020 5499292 |
| 3. ທ. ກິແກ້ວ ສີຫາລາດ | ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ | ໂທ:020 5170963 |
| 4. ທ. ຈັນໄຕ ວົງພະຈັນ | ພະນັກງານປະສານງານ ເມືອງ ໂພນໄຊ | |

# ການປູກດອກເຜີ້ງເພື່ອເປັນສິນຄ້າ



ດອກເຜີ້ງ ແມ່ນ ພືດຊະນິດໜຶ່ງ ທີ່ພິເສດຫຼາຍ ທີ່ປະກອບ ມີປະມານ 1400 ຊະນິດ ກວມເອົາ 174 ຊະນິດ ໃນ ໂລກ. ດອກເຜີ້ງມັກເກີດຢູ່ຕາມງ່າ ຫຼື ຂອນໄມ້ໃຫຍ່ ເຂດບໍລິເວນປ່າເຂດຮ້ອນ ( ເສັ້ນສູນສູດ ) ຊຶ່ງເປັນບ່ອນ ທີ່ມີໄຄ, ເປັນປ່າຊຸ່ມຊື່ນ. ຄຸນປະໂຫຍດຂອງດອກເຜີ້ງ ສ່ວນໃຫຍ່ແມ່ນເປັນດອກໄມ້ປະດັບເພື່ອສ້າງສີສັນໃນ ກາລະໂອກາດທີ່ສຳຄັນຕ່າງໆໃນສັງຄົມເຊິ່ງໃນປະຈຸບັນ ດອກເຜີ້ງ ໄດ້ກາຍເປັນພືດຊະນິດໜຶ່ງທີ່ມີ ຄວາມສຳຄັນ ທາງດ້ານເສດຖະກິດທີ່ສາມາດເປັນສິນຄ້າສົ່ງອອກໄດ້. ເຖິງຢ່າງໃດກໍ່ຕາມ, ການນຳເອົາດອກເຜີ້ງມາປູກເປັນ ສວນ ເພື່ອເກັບກ່ຽວຜົນຜະລິດນັ້ນ ແມ່ນທາງເລືອກໜຶ່ງທີ່ດີ ທີ່ສາມາດສ້າງລາຍຮັບໃຫ້ແກ່ຄອບຄົວໄດ້ ພ້ອມທັງສ້າງ ຄວາມສະດວກສະບາຍໃນການເກັບກູ້. ການນຳເອົາດອກເຜີ້ງມາປູກນັ້ນ ແມ່ນສາມາດເຮັດໄດ້ດ້ວຍຫຼາຍວິທີ, ສະນັ້ນ ການປູກ (ລ້ຽງ) ໃສ່ທ່ອນໄມ້ ແມ່ນວິທີໜຶ່ງທີ່ມີຜົນໄດ້ຮັບທີ່ດີ ຄື:

## ຂັ້ນຕອນທາງດ້ານເຕັກນິກວິທີການ



### 1. ການສ້າງເຮືອນຮົ່ມ

ນຳໃຊ້ໄມ້ ສ້າງເປັນເຮືອນຮົ່ມ ໂດຍໃຫ້ມີຄວາມສູງປະ ມານ 2 ແມັດ ( ເບິ່ງໃນຮູບ ) ເມື່ອງສ້າງເຮືອນຮ້ານໄວ້ ແລ້ວ ແມ່ນນຳເອົາຕະໜ່າງກັນແສງ 70% ປົກຄຸມໄວ້.

### 2. ການກະກຽມທ່ອນໄມ້

ກະກຽມທ່ອນໄມ້ ໃຫ້ໄດ້ຂະໜາດ ໜ້າຕ້າງ 3-5 ຊັງຕີ ແມັດ, ມີຄວາມຍາວປະມານ 30 ຊັງຕີແມັດ.

### 3. ການຄັດເລືອກແນວພັນ

ແນວພັນທີ່ຈະນຳມາປູກ (ລ້ຽງ) ຕ້ອງແມ່ນຊະນິດພັນ ທີ່ ມີຄວາມຕ້ອງການຂອງຕະຫຼາດສູງ ແລະ ເປັນລາຄາ. ເປັນຕົ້ນທີ່ມີຄວາມແຂງແຮງ, ສົມບູນດີ ໂດຍບໍ່ມີເຊື້ອ ພະຍາດ.

### 4. ການປູກ (ລ້ຽງ)

ນຳເອົາເຫງົ້າດອກເຜີ້ງທີ່ ຜ່ານການຄັດເລືອກ ແລະ ແຍກອອກແລ້ວມາມັດໃສ່ທ່ອນໄມ້ ດ້ວຍເຊືອກປໍສາ ແລະ ກາບ ໝາກພ້າວ, ໂດຍຈຳນວນເຫງົ້າທີ່ແຍກອອກມີຈຳນວນ ແຕ່ 3-5 ລຳ, ຫລັງຈາກນັ້ນກໍ່ບັກດ້ານເທິງຂອງທ່ອນໄມ້ ເປັນ ບ່ອນມັດລວດໃສ່, ຕໍ່ມາກໍ່ນຳໃຊ້ລວດເພື່ອມັດທ່ອນໄມ້ ແຂວນໄວ້ຮາວໄມ້ທາງດ້ານເທິງຊຶ່ງມີຄວາມສູງປະມານ 1,50 ແມັດ, ຫ່າງກັນ 50 ຊັງຕີແມັດ. ຫລັງຈາກນັ້ນກໍ່ຫົດນ້ຳ ເຊົ້າ ແລະ ແລງ ທຸກໆວັນກ່ອນມີແສງແດດຮ້ອນ.

## 5. ການຈະເລີນເຕີບໂຕ

ຜົນຈາກການທົດລອງ ການປູກ (ລ້ຽງ) ດອກເຜີ້ງ ທີ່ ບ້ານ ນ້ຳແຊ ເມືອງ ນາໝໍ້ ແຂວງ ອຸດົມໄຊ ໄດ້ໃຫ້ຮູ້ວ່າ ພາຍໃນໄລຍະເວລາ 14 ເດືອນ ຕົ້ນດອກເຜີ້ງ ສາມາດຂະຫຍາຍຕົວ ທາງດ້ານລວງຍາວ ສະເລ່ຍປະມານ 50 ຊັງຕີແມັດ,


ໂດຍ: 1. ທ.ຄຳພອນ ແສງດາລາ ສູນຄົ້ນຄ້ວາປ່າໄມ້ ໂທ : 020 5499292

2. ທ. ບັນຊາ ທຳມະວົງ ສູນຄົ້ນຄ້ວາປ່າໄມ້ ໂທ : 020 2208283

3. ທ. ອຸລາທອງ ວ. ວຽງຄຳ ສູນຄົ້ນຄ້ວາປ່າໄມ ໂທ : 020 5676207